ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

..............................

ລັດຖະບານ

ເລກທີ: 291 /ລບ

ນະຄອນຫຼວງວຽງຈັນ, ວັນທີ: 5 . 11. 2013

# ດຳລັດ
# ວ່າດ້ວຍຄັງສະສົມ
# ແຫ່ງລັດ

# ສາລະບານ

ໜ້າ


ລັດຖະບານ ແຫ່ງ ສປປ ລາວ ອອກດຳລັດ:....1
ພາກທີ I ບົດບັນຍັດທົ່ວໄປ ....1
ມາດຕາ 1 ຈຸດປະສົງ....1
ມາດຕາ 2 ຄັງສະສົມແຫ່ງລັດ ....2
ມາດຕາ 3 ໜ້າທີ່ຂອງຄັງສະສົມແຫ່ງລັດ ....2
ມາດຕາ 4 ການອະທິບາຍຄຳສັບ ....2
ມາດຕາ 5 ຫຼັກການຄຸ້ມຄອງ, ນຳໃຊ້ຄັງສະສົມແຫ່ງລັດ ....2
ມາດຕາ 6 ຂອບເຂດການນຳໃຊ້ ....2
ພາກທີ II ຄັງສະສົມແຫ່ງລັດ....3
ໝວດທີ 1 ແຫຼ່ງທຶນ, ອັດຕາສ່ວນ ແລະ ການນຳໃຊ້ຄັງສະສົມແຫ່ງລັດ....3
ມາດຕາ 7 ແຫຼ່ງທຶນຄັງສະສົມແຫ່ງລັດ ....3
ມາດຕາ 8 ອັດຕາສ່ວນຄັງສະສົມແຫ່ງລັດ....3
ມາດຕາ 9 ການນຳໃຊ້ຄັງສະສົມແຫ່ງລັດ....3
ໝວດທີ 2 ປະເພດຄັງສະສົມແຫ່ງລັດ....4
ມາດຕາ 10 ປະເພດຄັງສະສົມແຫ່ງລັດ....4
ມາດຕາ 11 ຄັງສະສົມເປັນເງິນ ....5
ມາດຕາ 12 ຄັງສະສົມເປັນວັດຖຸ, ສິນຄ້າ ....5
ມາດຕາ 13 ໝວດວັດຖຸ, ສິນຄ້າສະສົມແຫ່ງລັດ....5
ໝວດທີ 3 ແຜນການຄັງສະສົມແຫ່ງລັດ....6
ມາດຕາ 14 ແຜນການຄັງສະສົມແຫ່ງລັດ ....6
ມາດຕາ 15 ເນື້ອໃນຂອງແຜນການຄັງສະສົມແຫ່ງລັດ....6
ມາດຕາ 16 ລວມຍອດມູນຄ່າຄັງສະສົມແຫ່ງລັດ ....6
ໝວດທີ 4 ການຊື້-ຂາຍ,ລາຄາຊື້-ຂາຍ ແລະການສະສາງວັດຖຸ, ສິນຄ້າສະສົມແຫ່ງລັດ ....6
ມາດຕາ 17 ການຊື້ວັດຖຸ, ສິນຄ້າສະສົມແຫ່ງລັດ....6
ມາດຕາ 18 ການຂາຍວັດຖຸ, ສິນຄ້າສະສົມແຫ່ງລັດ....7
ມາດຕາ 19 ລາຄາຊື້-ຂາຍວັດຖຸ, ສິນຄ້າສະສົມແຫ່ງລັດ ....7
ມາດຕາ 20 ການສະສາງວັດຖຸ, ສິນຄ້າສະສົມແຫ່ງລັດ....7
ພາກທີ III ລະບົບສາງວັດຖຸ, ສິນຄ້າສະສົມແຫ່ງລັດ ....7
ໝວດທີ 1 ສາງວັດຖຸ, ສິນຄ້າສະສົມແຫ່ງລັດ ....7
ມາດຕາ 21 ສາງວັດຖຸ, ສິນຄ້າສະສົມແຫ່ງລັດ ....7
ມາດຕາ 22 ທີ່ຕັ້ງຂອງສາງວັດຖຸ, ສິນຄ້າສະສົມແຫ່ງລັດ.... 7

ມາດຕາ 23 ການສ້າງສາງວັດຖຸ, ສິນຄ້າສະສົມແຫ່ງລັດ........ 8
ມາດຕາ 24 ການປົກປັກຮັກສາວັດຖຸ, ສິນຄ້າສະສົມແຫ່ງລັດໃນສາງ........ 8
**ໝວດທີ 2 ການຮັບ, ການເບີກຈ່າຍ ແລະການເຄື່ອນຍ້າຍວັດຖຸ, ສິນຄ້າສະສົມແຫ່ງລັດ........ 8**
ມາດຕາ 25 ການຮັບ, ການເບີກຈ່າຍ ແລະການເຄື່ອນຍ້າຍວັດຖຸ, ສິນຄ້າສະສົມແຫ່ງລັດ........ 8
ມາດຕາ 26 ການຕົກລົງຮັບ, ເບີກຈ່າຍວັດຖຸ, ສິນຄ້າສະສົມແຫ່ງລັດ........ 8
ມາດຕາ 27 ການເຄື່ອນຍ້າຍວັດຖຸ, ສິນຄ້າສະສົມແຫ່ງລັດ........ 9
**ພາກທີ IV ຂໍ້ຫ້າມ........ 9**
ມາດຕາ 28 ຂໍ້ຫ້າມສຳລັບພະນັກງານ........ 9
ມາດຕາ 29 ຂໍ້ຫ້າມສຳລັບບຸກຄົນ, ນິຕິບຸກຄົນ ແລະການຈັດຕັ້ງອື່ນ........ 9
**ພາກທີ V ການຄຸ້ມຄອງແລະກວດກາ........ 10**
**ໝວດທີ 1 ອົງການຄຸ້ມຄອງວຽກງານຄັງສະສົມແຫ່ງລັດ........ 10**
ມາດຕາ 30 ອົງການຄຸ້ມຄອງວຽກງານຄັງສະສົມແຫ່ງລັດ........ 10
ມາດຕາ 31 ສິດ ແລະໜ້າທີ່ ຂອງກະຊວງການເງິນ........ 10
ມາດຕາ 32 ສິດ ແລະໜ້າທີ່ຂອງກະຊວງແຜນການ ແລະການລົງທຶນ........ 11
ມາດຕາ 33 ສິດ ແລະໜ້າທີ່ຂອງກະຊວງທີ່ຄຸ້ມຄອງວັດຖຸ, ສິນຄ້າສະສົມແຫ່ງລັດ........ 12
ມາດຕາ 34 ຄວາມຮັບຜິດຊອບ ຂອງອົງການປົກຄອງທ້ອງຖິ່ນ ແລະພາກສ່ວນອື່ນ........ 13
**ໝວດທີ 2 ອົງການກວດກາວຽກງານຄັງສະສົມແຫ່ງລັດ........ 13**
ມາດຕາ 35 ອົງການກວດກາ........ 13
ມາດຕາ 36 ເນື້ອໃນກວດກາ........ 13
ມາດຕາ 37 ຮູບການກວດກາ........ 13
**ພາກທີ VI ນະໂຍບາຍຕໍ່ຜູ້ມີຜົນງານ ແລະມາດຕະການຕໍ່ຜູ້ລະເມີດ........ 14**
ມາດຕາ 38 ນະໂຍບາຍຕໍ່ຜູ້ມີຜົນງານ........ 14
ມາດຕາ 39 ມາດຕະການຕໍ່ຜູ້ລະເມີດ........ 14
**ພາກທີ VII ບົດບັນຍັດສຸດທ້າຍ........ 14**
ມາດຕາ 40 ການຈັດຕັ້ງປະຕິບັດ........ 14
ມາດຕາ 41 ຜົນສັກສິດ........ 14

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

********************

ລັດຖະບານ

ເລກທີ: 291 /ລບ

ນະຄອນຫຼວງວຽງຈັນ, ວັນທີ: 5-11-2013

# ດຳລັດ

## ວ່າດ້ວຍຄັງສະສົມແຫ່ງລັດ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 06/05/2003;
- ອີງຕາມ ກົດໝາຍວ່າດ້ວຍງົບປະມານແຫ່ງລັດ ສະບັບເລກທີ 02/ສພຊ, ລົງວັນທີ 26 ທັນວາ 2006;
- ອີງຕາມ ໜັງສືສະເໜີຂອງລັດຖະມົນຕີວ່າການກະຊວງການເງິນ ສະບັບເລກທີ 2886/ກງ, ລົງ ວັນທີ 2/10/2013.

**ລັດຖະບານ ອອກດຳລັດ:**

### ພາກທີ I

### ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການກ່ຽວກັບການຈັດຕັ້ງ, ການຄຸ້ມຄອງ, ການຕິດຕາມ, ການກວດກາ ແລະ ການນຳໃຊ້ຄັງສະສົມແຫ່ງລັດ ເພື່ອໃຫ້ການປະຕິບັດມີຄວາມເປັນເອກະພາບ, ມີປະສິດທິພາບ, ຖືກຕ້ອງ ແລະ ສອດຄ່ອງກັບລະບຽບກົດໝາຍແນໃສ່ຕອບສະໜອງຄວາມຮຽກຮ້ອງຕ້ອງການອັນຮີບດ່ວນ, ສຸກເສີນໃຫ້ແກ່ວຽກງານປ້ອງກັນ, ຕ້ານ ແລະ ຟື້ນຟູຜົນກະທົບຈາກໄພພິບັດ ແລະ ປະກອບສ່ວນດັດສົມຕະຫຼາດໃຫ້ມີຄວາມໝັ້ນທ່ຽງ, ປະກອບສ່ວນເຂົ້າໃນວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ແນໃສ່ຮັບປະກັນສະຖຽລະພາບທາງດ້ານເສດຖະກິດ, ການເມືອງແຫ່ງຊາດ. ສ້າງເງື່ອນໄຂເອື້ອອຳນວຍແກ່ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດສັງຄົມຂອງລັດຖະບານໃຫ້ບັນລຸຄາດໝາຍທີ່ກຳນົດໄວ້.

ມາດຕາ 2 **ຄັງສະສົມແຫ່ງລັດ**

ຄັງສະສົມແຫ່ງລັດ ແມ່ນການສະສົມເງິນ, ວັດຖຸ, ສິນຄ້າສະສົມແຫ່ງລັດ ຊຶ່ງລັດເປັນຜູ້ຄຸ້ມຄອງ ແລະ ຮັກສາ ເພື່ອຊຸກຍູ້ການພັດທະນາ ແລະ ການຮັບມືກັບໄພພິບັດທີ່ອາດຈະເກີດຂຶ້ນ.

ມາດຕາ 3 **ໜ້າທີ່ຂອງຄັງສະສົມແຫ່ງລັດ**

ຄັງສະສົມແຫ່ງລັດມີໜ້າທີ່ຄຸ້ມຄອງ, ປົກປັກຮັກສາ, ຈັດຕັ້ງປະຕິບັດ, ຕິດຕາມກວດກາ ແລະ ປະເມີນຜົນ ກ່ຽວກັບການເຄື່ອນໄຫວ ຮັບ-ເບີກຈ່າຍ ແລະ ນຳໃຊ້ ວັດຖຸ, ສິນຄ້າ ແລະ ເງິນສະສົມແຫ່ງລັດ ເພື່ອຊຸກຍູ້ການພັດທະນາ ແລະ ການຮັບມືກັບໄພພິບັດທີ່ອາດຈະເກີດຂຶ້ນ.

ມາດຕາ 4 **ການອະທິບາຍຄຳສັບ**

ຄຳສັບທີ່ໃຊ້ໃນດຳລັດສະບັບນີ້ມີຄວາມໝາຍ ດັ່ງນີ້:

1. **ວັດຖຸ, ສິນຄ້າສະສົມແຫ່ງລັດ** ໝາຍເຖິງ ວັດຖຸ, ອຸປະກອນ, ເຄື່ອງມື, ພາຫະນະ, ແນວພັນພືດ, ຢາປົວພະຍາດ, ນ້ຳມັນເຊື້ອໄຟ ແລະ ສິນຄ້າອື່ນທີ່ນອນຢູ່ໃນໝວດວັດຖຸ, ສິນຄ້າສະສົມແຫ່ງລັດ;
2. **ໝວດວັດຖຸ, ສິນຄ້າສະສົມແຫ່ງລັດ** ໝາຍເຖິງ ລາຍການວັດຖຸ, ອຸປະກອນ, ເຄື່ອງມື, ພາຫະນະ, ແນວພັນພືດ, ຢາປົວພະຍາດ, ນ້ຳມັນເຊື້ອໄຟ ແລະ ສິນຄ້າອື່ນ ທີ່ລັດຖະບານກຳນົດໃຫ້ມີການສະສົມໃນແຕ່ລະໄລຍະ;
3. **ເຫດການສຸກເສີນ** ໝາຍເຖິງ ໄພພິບັດທາງທຳມະຊາດ, ເຫດໂສກນາດຕະກຳ, ອັກຄີໄພ, ພະຍາດລະບາດທີ່ມີລັກສະນະເປັນວົງກວ້າງ, ການກໍ່ການຮ້າຍ, ການຮຸກຮານ, ວິກິດການທາງດ້ານການເງິນ ແລະເຫດການອື່ນ ທີ່ມີຄວາມຈຳເປັນຕ້ອງແກ້ໄຂດ່ວນ;
4. **ລວມຍອດມູນຄ່າຄັງສະສົມແຫ່ງລັດ** ໝາຍເຖິງ ຍອດເງິນໃນບັນຊີຄັງສະສົມ ແລະມູນຄ່າວັດຖຸ, ສິນຄ້າ ຢູ່ໃນຄັງສະສົມແຫ່ງລັດ;

ມາດຕາ 5 **ຫຼັກການຄຸ້ມຄອງ, ນຳໃຊ້ຄັງສະສົມແຫ່ງລັດ**

ການຄຸ້ມຄອງ, ນຳໃຊ້ຄັງສະສົມແຫ່ງລັດປະຕິບັດຕາມຫຼັກການ ດັ່ງນີ້:

1. ຄຸ້ມຄອງຢ່າງຮັດກຸມ, ປອດໄພ ແລະ ປິດລັບຕາມລະບຽບກົດໝາຍ;
2. ຮັບປະກັນທົດແທນຄືນຢ່າງຄົບຖ້ວນ ຕາມຈຳນວນທີ່ເບີກຈ່າຍອອກ;
3. ນຳໃຊ້ຖືກຕ້ອງຕາມຈຸດປະສົງ ແລະ ເປົ້າໝາຍຂອງຄັງສະສົມແຫ່ງລັດ;
4. ຮັບປະກັນ ຄວາມຖືກຕ້ອງ, ໂປ່ງໃສ ແລະ ສາມາດກວດສອບໄດ້;
5. ຄຸ້ມຄອງລວມສູນ ເປັນເອກະພາບ ແລະ ແບ່ງຂັ້ນຄຸ້ມຄອງຢ່າງເຂັ້ມງວດ.

ມາດຕາ 6 **ຂອບເຂດການນຳໃຊ້**

ດຳລັດສະບັບນີ້ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງທີ່ມີການພົວພັນເຖິງການສ້າງຄຸ້ມຄອງບໍລິຫານ ແລະ ນຳໃຊ້ຄັງສະສົມແຫ່ງລັດ.

## ພາກທີ II
## ຄັງສະສົມແຫ່ງລັດ
## ໝວດທີ 1
## ແຫຼ່ງທຶນ, ອັດຕາສ່ວນ ແລະການນຳໃຊ້ຄັງສະສົມແຫ່ງລັດ

**ມາດຕາ 7 ແຫຼ່ງທຶນຄັງສະສົມແຫ່ງລັດ**

ແຫຼ່ງທຶນຄັງສະສົມແຫ່ງລັດໄດ້ມາຈາກ:

1. ງົບປະມານຂອງລັດ ທັກເອົາ ສາມສ່ວນຮ້ອຍ(3%) ຂອງແຜນລາຍຈ່າຍງົບປະມານທັງໝົດປະຈຳປີຕາມການຮັບຮອງຂອງສະພາແຫ່ງຊາດ;
2. ຍອດເຫຼືອລາຍຈ່າຍງົບປະມານປະຈຳສົກປີ;
3. ລາຍຮັບເກີນແຜນຕາມການຕົກລົງຂອງລັດຖະບານ;
4. ງົບປະມານເກີນດຸນຈາກການດຸນດ່ຽງງົບປະມານແຫ່ງລັດ;
5. ແຫຼ່ງອື່ນນອກຈາກງົບປະມານແຫ່ງລັດເຊັ່ນ:
   - ຂາຍຊັບພະຍາກອນທຳມະຊາດ ຕາມການຕົກລົງຂອງລັດຖະບານ;
   - ດອກເບ້ຍເງິນຝາກຂອງຄັງສະສົມ;
   - ການລະດົມ, ການປະກອບສ່ວນຊ່ວຍເຫຼືອຂອງບຸກຄົນ, ນິຕິບຸກຄົນ ແລະອົງການຈັດຕັ້ງທັງພາຍໃນ ແລະຕ່າງປະເທດ ແລະແຫຼ່ງອື່ນທີ່ຖືກຕ້ອງຕາມກົດໝາຍ.

**ມາດຕາ 8 ອັດຕາສ່ວນຄັງສະສົມແຫ່ງລັດ**

ລັດຖະບານ ພິຈາລະນາ ແລະ ຕົກລົງອັດຕາສ່ວນຄັງສະສົມແຫ່ງລັດເປັນເງິນ, ເປັນວັດຖຸ, ສິນຄ້າສະສົມຕາມການສະເໜີຂອງ ກະຊວງການເງິນ.

**ມາດຕາ 9 ການນຳໃຊ້ຄັງສະສົມແຫ່ງລັດ**

ການນຳໃຊ້ຄັງສະສົມແຫ່ງລັດປະຕິບັດ ດັ່ງນີ້:

1. ການນຳໃຊ້ຄັງສະສົມແຫ່ງລັດເປັນເງິນ

ການນຳໃຊ້ເງິນໂດຍກົງ ກະຊວງ ຫຼື ອົງການປົກຄອງທ້ອງຖິ່ນ ຫຼື ພາກສ່ວນທີ່ກ່ຽວຂ້ອງເປັນຜູ້ສະເໜີຫານາຍົກລັດຖະມົນຕີ ເພື່ອຂໍນຳໃຊ້ເງິນສະສົມແຫ່ງລັດ ໃນກໍລະນີມີເຫດການ ຫຼື ໄພພິບັດເກີດຂຶ້ນ. ລັດຖະມົນຕີວ່າການກະຊວງການເງິນ ອີງໃສ່ການຕົກລົງຂອງນາຍົກລັດຖະມົນຕີອອກຂໍ້ຕົກລົງ ເພື່ອຈັດຕັ້ງປະຕິບັດການເບີກຈ່າຍເງິນຕົວຈິງ.

ການນຳໃຊ້ເງິນເພື່ອຊື້ວັດຖຸ, ສິນຄ້າສະສົມແຫ່ງລັດ ກະຊວງການເງິນ ສັງລວມແຜນການຈັດຊື້ວັດຖຸ, ສິນຄ້າຂອງ ບັນດາກະຊວງ ທີ່ຄຸ້ມຄອງວັດຖຸ, ສິນຄ້າສະສົມແຫ່ງລັດ ນຳສະເໜີນາຍົກລັດຖະມົນຕີ ເພື່ອພິຈາລະນາຕົກລົງການຈັດຊື້ວັດຖຸ, ສິນຄ້າສະສົມແຫ່ງລັດ. ລັດຖະມົນຕີ

ວ່າການກະຊວງການເງິນ ອີງໃສ່ການຕົກລົງຂອງນາຍົກລັດຖະມົນຕີອອກຂໍ້ຕົກລົງ ເພື່ອຈັດຕັ້ງປະຕິບັດການຈັດຊື້ວັດຖຸ, ສິນຄ້າຕົວຈິງ.

ນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານຄັງສະສົມແຫ່ງລັດ ບໍ່ໃຫ້ເກີນ ຫ້າສ່ວນຮ້ອຍ(5%) ຂອງຈຳນວນເງິນລາຍຮັບຈາກງົບປະມານແຫ່ງລັດ ໃນແຕ່ລະສົກປີ ຊຶ່ງນຳໃຊ້ຕາມເປົ້າໝາຍ ດັ່ງນີ້:

- ບຳລຸງຮັກສາ, ສ້ອມແປງປົກກະຕິ ຕາມມາດຕະຖານເຕັກນິກ ໃນການຄຸ້ມຄອງວິຊາການໃນລະບົບ ສາງ, ວັດຖຸ, ສິນຄ້າສະສົມແຫ່ງລັດ;
- ລາຍຈ່າຍວິຊາການຕິດພັນ ການຮັບ, ຈ່າຍ, ຊື້, ຂາຍ, ສະສາງ ວັດຖຸ, ສິນຄ້າສະສົມແຫ່ງລັດ;
- ລາຍຈ່າຍວິຊາການ ຂອງກະຊວງທີ່ຄຸ້ມຄອງວັດຖຸ, ສິນຄ້າສະສົມແຫ່ງລັດຕາມແຜນການອະນຸມັດ;
- ລາຍຈ່າຍໃນການປົກປັກຮັກສາ, ປະກັນໄພ ສາງ, ວັດຖຸ, ສິນຄ້າສະສົມແຫ່ງລັດ;
- ບຳລຸງກໍ່ສ້າງພະນັກງານ-ລັດຖະກອນ, ສົ່ງເສີມການຄົ້ນຄວ້າວິທະຍາສາດກ່ຽວກັບວຽກງານຄັງສະສົມແຫ່ງລັດ;
- ປະກອບອຸປະກອນ, ເຄື່ອງມື, ເຕັກໂນໂລຊີ ເຂົ້າໃນການບໍລິຫານໃຫ້ທັນສະໄໝ;
- ລາຍຈ່າຍອື່ນທີ່ຈຳເປັນໃນການບໍລິຫານວິຊາການ.

ກົມສະສົມແຫ່ງລັດເປັນຜູ້ສັງລວມແຜນລາຍຈ່າຍເຂົ້າໃນການເຄື່ອນໄຫວວຽກງານຄັງສະສົມແຫ່ງລັດຂອງ
ບັນດາກະຊວງທີ່ຄຸ້ມຄອງວັດຖຸ, ສິນຄ້າສະສົມແຫ່ງລັດ ເພື່ອສະເໜີ ລັດຖະມົນຕີວ່າການກະຊວງການເງິນ ພິຈາລະນາຮັບຮອງ. ລັດຖະມົນຕີວ່າການກະຊວງການເງິນ ອອກຂໍ້ຕົກລົງ ປະຕິບັດການເບີກຈ່າຍເງິນສະສົມແຫ່ງລັດຕົວຈິງ.

2. ການນຳໃຊ້ວັດຖຸ, ສິນຄ້າສະສົມແຫ່ງລັດ

ກະຊວງ ຫຼື ອົງການປົກຄອງທ້ອງຖິ່ນ ຫຼື ພາກສ່ວນທີ່ກ່ຽວຂ້ອງເປັນຜູ້ສະເໜີຫາ ນາຍົກລັດຖະມົນຕີ ເພື່ອຂໍນຳໃຊ້ວັດຖຸ, ສິນຄ້າສະສົມແຫ່ງລັດ ໃນກໍລະນີມີເຫດການ ຫຼື ໄພພິບັດເກີດຂຶ້ນ. ລັດຖະມົນຕີວ່າການກະຊວງການເງິນ ອີງໃສ່ການຕົກລົງຂອງ ນາຍົກລັດຖະມົນຕີ ອອກຂໍ້ຕົກລົງເພື່ອຈັດຕັ້ງປະຕິບັດການນຳໃຊ້ວັດຖຸ, ສິນຄ້າສະສົມແຫ່ງລັດຕົວຈິງ.

## ໝວດທີ 2
## ປະເພດຄັງສະສົມແຫ່ງລັດ

### ມາດຕາ 10 ປະເພດຄັງສະສົມແຫ່ງລັດ

ຄັງສະສົມແຫ່ງລັດປະກອບມີ ສອງ ປະເພດ ດັ່ງນີ້:

1. ຄັງສະສົມເປັນເງິນ;
2. ຄັງສະສົມເປັນວັດຖຸ, ສິນຄ້າ.

**ມາດຕາ 11 ຄັງສະສົມເປັນເງິນ**

ຄັງສະສົມເປັນເງິນແມ່ນ ສ່ວນໜຶ່ງຂອງຄັງສະສົມແຫ່ງລັດທີ່ສະສົມໄວ້ເປັນເງິນສົດຕາມອັດຕາສ່ວນທີ່ລັດຖະບານ ອະນຸມັດໃນແຕ່ລະໄລຍະ, ກະຊວງການເງິນ ຄຸ້ມຄອງຄັງສະສົມເປັນເງິນ ຢ່າງລວມສູນໂດຍການເປີດບັນຊີຄັງສະສົມແຫ່ງລັດ ຢູ່ຄັງເງິນແຫ່ງຊາດ ຫຼືທະນາຄານ. ການຄຸ້ມຄອງລະບົບການເງິນ ແລະ ການບັນຊີຂອງຄັງສະສົມແຫ່ງລັດ ຕ້ອງປະຕິບັດຕາມລະບຽບກົດໝາຍທີ່ກ່ຽວຂ້ອງ. ສ່ວນດອກເບ້ຍ ຕ້ອງມອບເຂົ້າບັນຊີຄັງສະສົມແຫ່ງລັດ ຕາມທີ່ໄດ້ກຳນົດໃນ ມາດຕາ 7 ຂອງດຳລັດສະບັບນີ້.

ສຳລັບການສະສົມເປັນຄຳ ( ຄຳແທ່ງ 999 ) ແມ່ນອີງຕາມການຕົກລົງຂອງລັດຖະບານ.

**ມາດຕາ 12 ຄັງສະສົມເປັນວັດຖຸ, ສິນຄ້າ**

ຄັງສະສົມເປັນວັດຖຸ, ສິນຄ້າ ແມ່ນສ່ວນໜຶ່ງຂອງຄັງສະສົມແຫ່ງລັດທີ່ສະສົມໄວ້ເປັນວັດຖຸ, ສິນຄ້າສະສົມແຫ່ງລັດຕາມອັດຕາສ່ວນທີ່ລັດຖະບານອະນຸມັດໃນແຕ່ລະໄລຍະ ຊຶ່ງມີການແບ່ງງານຄຸ້ມຄອງ ແລະປົກປັກຮັກສາຢູ່ໃນສາງວັດຖຸ, ສິນຄ້າສະສົມແຫ່ງລັດ.

**ມາດຕາ 13 ໝວດວັດຖຸ, ສິນຄ້າສະສົມແຫ່ງລັດ**

ໝວດວັດຖຸ, ສິນຄ້າສະສົມແຫ່ງລັດ ຕ້ອງຕອບສະໜອງຈຸດປະສົງ ຂອງການສະສົມທີ່ໄດ້ກຳນົດໄວ້ໃນ ມາດຕາ 1 ຂອງດຳລັດສະບັບນີ້ ຊຶ່ງແມ່ນໝວດວັດຖຸ, ສິນຄ້າທີ່ເປັນຍຸດທະສາດ, ສິນຄ້າທີ່ຈຳເປັນ ຊຶ່ງມີຄວາມຕ້ອງການຊົມໃຊ້ເປັນຈຳນວນຫລາຍ ຫຼື ຕອບສະໜອງໃນກໍລະນີເກີດມີເຫດການສຸກເສີນ, ຮີບດ່ວນ.

ໝວດວັດຖຸ, ສິນຄ້າສະສົມແຫ່ງລັດ ປະກອບມີ ດັ່ງນີ້:

1. ວັດຖຸ, ສິນຄ້າຮັບປະກັນດ້ານເສດຖະກິດ ແລະ ການດຳລົງຊີວິດຂອງປະຊາຊົນໃນສັງຄົມ;
2. ວັດຖຸ, ສິນຄ້າຮັບໃຊ້ໃນການປ້ອງກັນ, ຕ້ານ ແລະ ຟື້ນຟູຜົນກະທົບຈາກໄພພິບັດ;
3. ວັດຖຸ, ສິນຄ້າຮັບໃຊ້ໃຫ້ແກ່ວຽກງານປ້ອງກັນຊາດ ແລະ ປ້ອງກັນຄວາມສະຫງົບ;
4. ວັດຖຸ, ສິນຄ້າຮັບໃຊ້ໃຫ້ແກ່ການປ້ອງກັນ, ຕ້ານ, ສະກັດກັ້ນພະຍາດລະບາດ ແລະ ຊ່ວຍເຫຼືອໃນເວລາສຸກເສີນໃຫ້ແກ່ຄົນ, ພືດ ແລະ ສັດ;
5. ແນວພັນພືດ;
6. ນ້ຳມັນເຊື້ອໄຟ.

ລາຍລະອຽດກ່ຽວກັບໝວດວັດຖຸ, ສິນຄ້າສະສົມແຫ່ງລັດ ແມ່ນລັດຖະບານເປັນຜູ້ຕົກລົງແຕ່ລະໄລຍະຕາມ ການສະເໜີຂອງກະຊວງການເງິນ.

## ໝວດທີ 3
## ແຜນການຄັງສະສົມແຫ່ງລັດ

**ມາດຕາ 14 ແຜນການຄັງສະສົມແຫ່ງລັດ**

ແຜນການຄັງສະສົມແຫ່ງລັດ ປະກອບມີ: ແຜນການ 5 ປີ ແລະແຜນການປະຈໍາປີ ຊຶ່ງໄດ້ສັງລວມເຂົ້າໃນແຜນພັດທະນາເສດຖະກິດ - ສັງຄົມແຫ່ງຊາດ ແລະ ແຜນງົບປະມານແຫ່ງລັດ.

ການສ້າງແຜນການຄັງສະສົມແຫ່ງລັດ ອີງໃສ່ເງື່ອນໄຂ ດັ່ງນີ້:

1. ແຜນຍຸດທະສາດການພັດທະນາວຽກງານຄັງສະສົມແຫ່ງລັດ;
2. ຈຸດປະສົງຂອງຄັງສະສົມແຫ່ງລັດ;
3. ການຄາດຄະເນສະພາບເສດຖະກິດ - ສັງຄົມ ພາຍໃນປະເທດ ແລະ ສາກົນ;
4. ຄວາມສາມາດໃນການດຸ່ນດ່ຽງງົບປະມານແຫ່ງລັດ.

**ມາດຕາ 15 ເນື້ອໃນຂອງແຜນການຄັງສະສົມແຫ່ງລັດ**

ແຜນການຄັງສະສົມແຫ່ງລັດ ປະກອບມີເນື້ອໃນ ດັ່ງນີ້:

1. ລະດັບຄັງສະສົມແຫ່ງລັດໃນທ້າຍສົກປີງົບປະມານ;
2. ແຜນການເພີ່ມ, ຫຼຸດ ແລະ ການປ່ຽນຖ່າຍວັດຖຸ, ສິນຄ້າສະສົມແຫ່ງລັດ;
3. ການລົງທຶນພັດທະນາພື້ນຖານໂຄງລ່າງ;
4. ຄົ້ນຄວ້າ, ໝູນໃຊ້ຄວາມກ້າວໜ້າທາງດ້ານວິທະຍາສາດ ແລະ ເຕັກໂນໂລຊີ;
5. ວິທີການດຸ່ນດ່ຽງແຫຼ່ງການເງິນ ໃຫ້ແກ່ການເຄື່ອນໄຫວວຽກງານຄັງສະສົມແຫ່ງລັດ.

**ມາດຕາ 16 ລວມຍອດມູນຄ່າຄັງສະສົມແຫ່ງລັດ**

ລວມຍອດມູນຄ່າຄັງສະສົມແຫ່ງລັດ ປະກອບມີ:

1. ຍອດເຫຼືອເງິນໃນບັນຊີຄັງສະສົມແຫ່ງລັດ;
2. ຍອດເຫຼືອມູນຄ່າ ວັດຖຸ, ສິນຄ້າສະສົມ ແຫ່ງລັດໃນສາງ.

## ໝວດທີ 4
## ການຊື້-ຂາຍ, ລາຄາຊື້-ຂາຍ ແລະການສະສາງວັດຖຸ, ສິນຄ້າສະສົມແຫ່ງລັດ

**ມາດຕາ 17 ການຊື້ວັດຖຸ, ສິນຄ້າສະສົມແຫ່ງລັດ**

ການຊື້ວັດຖຸ, ສິນຄ້າສະສົມແຫ່ງລັດ ຕ້ອງປະຕິບັດຕາມແຜນການທີ່ໄດ້ຮັບຮອງໃນແຕ່ລະປີ, ດໍາເນີນການຈັດຊື້ຢ່າງເປີດເຜີຍ, ໂປ່ງໃສ ແລະ ຖືກຕ້ອງຕາມຂັ້ນຕອນທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 18 ການຂາຍວັດຖຸ, ສິນຄ້າສະສົມແຫ່ງລັດ**

ການຂາຍວັດຖຸ, ສິນຄ້າສະສົມແຫ່ງລັດ ຕ້ອງປະຕິບັດຕາມແຜນການຂອງກະຊວງທີ່ຄຸ້ມຄອງວັດຖຸ, ສິນຄ້າ ສະສົມແຫ່ງລັດທີ່ກ່ຽວຂ້ອງບົນພື້ນຖານການເຫັນດີ ຈາກກະຊວງການເງິນ.

ການຂາຍວັດຖຸ, ສິນຄ້າສະສົມແຫ່ງລັດ ຕ້ອງໄດ້ປະເມີນລາຄາໂດຍຄະນະກຳມະການທີ່ໄດ້ຮັບການແຕ່ງຕັ້ງ ຈາກກະຊວງການເງິນ ແລະຕ້ອງດຳເນີນຕາມຂັ້ນຕອນແບບເປີດເຜີຍ, ໂປ່ງໃສ, ຍຸຕິທຳ ຮັບປະກັນຜົນປະໂຫຍດສູງສຸດຂອງລັດ ແລະ ປະຕິບັດຕາມລະບຽບກົດໝາຍທີ່ກ່ຽວຂ້ອງ.

ລາຍໄດ້ຈາກການຂາຍວັດຖຸ, ສິນຄ້າສະສົມແຫ່ງລັດ ຕ້ອງມອບເຂົ້າບັນຊີຄັງສະສົມແຫ່ງລັດ.

**ມາດຕາ 19 ລາຄາຊື້-ຂາຍວັດຖຸ, ສິນຄ້າສະສົມແຫ່ງລັດ**

ກະຊວງການເງິນ ອີງໃສ່ມາດຖານເຕັກນິກ, ລາຄາຕະຫຼາດຢູ່ພາຍໃນ ແລະ ສາກົນ ເພື່ອກຳນົດລາຄາກາງການຊື້-ຂາຍຂອງວັດຖຸ, ສິນຄ້າສະສົມ.

ບັນດາກະຊວງທີ່ຄຸ້ມຄອງວັດຖຸ, ສິນຄ້າສະສົມແຫ່ງລັດໂດຍກົງ ສະເໜີລາຄາ ຊື້-ຂາຍ ຫາກະຊວງການເງິນເພື່ອພິຈາລະນາຮັບຮອງ ຫຼື ຕາມລາຄາຕົກລົງຂອງລັດຖະບານ.

ລັດຖະມົນຕີວ່າການກະຊວງການເງິນເປັນຜູ້ຕົກລົງຮັບຮອງລາຄາການ ຊື້-ຂາຍ ຕົວຈິງແຕ່ລະໝວດວັດຖຸ, ສິນຄ້າສະສົມທີ່ມີການ ຊື້-ຂາຍ.

**ມາດຕາ 20 ການສະສາງວັດຖຸ, ສິນຄ້າສະສົມແຫ່ງລັດ**

ວັດຖຸ, ສິນຄ້າສະສົມແຫ່ງລັດ ຈະຖືກສະສາງໃນກໍລະນີໃດໜຶ່ງ ດັ່ງນີ້:

1. ໝົດອາຍຸການນຳໃຊ້ ແລະ ບໍ່ຕ້ອງການນຳໃຊ້;
2. ເປ່ເພບໍ່ສາມາດນຳໃຊ້ໄດ້ ຫຼື ສ້ອມແປງກໍບໍ່ມີປະສິດທິຜົນ;
3. ເຊື່ອມຄຸນ.

ໃນກໍລະນີມີລາຍໄດ້ຈາກການສະສາງວັດຖຸ, ສິນຄ້າສະສົມແຫ່ງລັດຕ້ອງມອບເຂົ້າບັນຊີຄັງສະສົມແຫ່ງລັດ.

## ພາກທີ III
## ລະບົບສາງວັດຖຸ, ສິນຄ້າສະສົມແຫ່ງລັດ
## ໝວດທີ 1
## ສາງວັດຖຸ, ສິນຄ້າສະສົມແຫ່ງລັດ

**ມາດຕາ 21 ສາງວັດຖຸ, ສິນຄ້າສະສົມແຫ່ງລັດ**

ສາງວັດຖຸ, ສິນຄ້າສະສົມແຫ່ງລັດ ແມ່ນຕຶກອາຄານ ຫຼື ສະຖານທີ່ເກັບມ້ຽນວັດຖຸ, ສິນຄ້າສະສົມແຫ່ງລັດ ເພື່ອຮັບປະກັນຕາມຄຸນລັກສະນະສະເພາະຂອງແຕ່ລະໝວດວັດຖຸ, ສິນຄ້າສະສົມແຫ່ງລັດ.

**ມາດຕາ 22 ທີ່ຕັ້ງຂອງສາງວັດຖຸ, ສິນຄ້າສະສົມແຫ່ງລັດ**

ທີ່ຕັ້ງຂອງສາງວັດຖຸ, ສິນຄ້າສະສົມແຫ່ງລັດໃຫ້ສອດຄ່ອງກັບເງື່ອນໄຂ ດັ່ງນີ້:

1. ຈຸດປະສົງ ແລະຄວາມຕ້ອງການຂອງຄັງສະສົມແຫ່ງລັດ;
2. ແຜນຍຸດທະສາດຄັງສະສົມແຫ່ງລັດ ແລະ ການຈັດສັນການນຳໃຊ້ທີ່ດິນ;
3. ມີຄວາມສະດວກທາງດ້ານພື້ນຖານໂຄງລ່າງ;
4. ເໝາະສົມກັບການສະໜອງວັດຖຸ, ສິນຄ້າສະສົມແຫ່ງລັດ ແລະ ຮັບປະກັນຄວາມປອດໄພ.

**ມາດຕາ 23 ການສ້າງສາງວັດຖຸ, ສິນຄ້າສະສົມແຫ່ງລັດ**

ສາງວັດຖຸ, ສິນຄ້າສະສົມແຫ່ງລັດ ຕ້ອງສ້າງຂຶ້ນຢ່າງເປັນລະບົບ, ຮັບປະກັນຄວາມປອດໄພ, ຮັບປະກັນທາງດ້ານເຕັກນິກໃນການປົກປັກຮັກສາ ແລະ ລັກສະນະສະເພາະຂອງແຕ່ລະໝວດວັດຖຸ, ສິນຄ້າສະສົມແຫ່ງລັດ ຕາມມາດຕະຖານທີ່ໄດ້ຮັບຮອງ.

ກະຊວງການເງິນ ເປັນຜູ້ພິຈາລະນາຮັບຮອງມາດຕະຖານຂອງສາງວັດຖຸ, ສິນຄ້າສະສົມແຫ່ງລັດ ຕາມການສະເໜີຂອງກະຊວງທີ່ຄຸ້ມຄອງວັດຖຸ, ສິນຄ້າສະສົມແຫ່ງລັດທີ່ກ່ຽວຂ້ອງ.

**ມາດຕາ 24 ການປົກປັກຮັກສາວັດຖຸ, ສິນຄ້າສະສົມແຫ່ງລັດໃນສາງ**

ວັດຖຸ, ສິນຄ້າສະສົມແຫ່ງລັດໃນສາງຕ້ອງໄດ້ຮັບການປົກປັກຮັກສາ ດັ່ງນີ້:

1. ປະຕິບັດຕາມມາດຕະຖານທາງດ້ານເຕັກນິກ;
2. ມີການກວດກາ ແລະ ບຳລຸງຮັກສາຕາມກຳນົດໝາຍຂອງແຕ່ລະໝວດວັດຖຸ, ສິນຄ້າສະສົມແຫ່ງລັດ.

## ໝວດທີ 2
## ການຮັບ, ການເບີກຈ່າຍ ແລະ ການເຄື່ອນຍ້າຍວັດຖຸ, ສິນຄ້າສະສົມແຫ່ງລັດ

**ມາດຕາ 25 ການຮັບ, ການເບີກຈ່າຍ ວັດຖຸ, ສິນຄ້າສະສົມແຫ່ງລັດ**

ການຮັບ, ເບີກຈ່າຍວັດຖຸ, ສິນຄ້າສະສົມແຫ່ງລັດປະຕິບັດ ດັ່ງນີ້:

1. ຖືກຕ້ອງກັບແຜນການ, ເປົ້າໝາຍ ແລະ ຖືກຕາມສິດອຳນາດໃນການຕົກລົງ;
2. ຖືກຕ້ອງຕາມໝວດ, ຈຳນວນ, ຄຸນນະພາບ ແລະ ມູນຄ່າວັດຖຸ, ສິນຄ້າສະສົມແຫ່ງລັດ;
3. ຖືກຕ້ອງຕາມສະຖານທີ່ ທີ່ໄດ້ກຳນົດ, ຮັບປະກັນໃຫ້ທັນເວລາ ແລະ ປອດໄພ.

**ມາດຕາ 26 ການຕົກລົງຮັບ, ເບີກຈ່າຍວັດຖຸ, ສິນຄ້າສະສົມແຫ່ງລັດ**

ການຮັບ, ເບີກຈ່າຍວັດຖຸ, ສິນຄ້າສະສົມແຫ່ງລັດຕາມການຕົກລົງ ດັ່ງນີ້:

1. ນາຍົກລັດຖະມົນຕີຕົກລົງຮັບ, ເບີກຈ່າຍວັດຖຸ, ສິນຄ້າສະສົມແຫ່ງລັດ ໃນກໍລະນີສຸກເສີນ, ຈຳເປັນ, ຮີບດ່ວນ ແລະ ເກີດໄພພິບັດ;

2. ກະຊວງການເງິນ ຕົກລົງຮັບ, ເບີກຈ່າຍວັດຖຸ, ສິນຄ້າສະສົມແຫ່ງລັດ ຕາມແຜນການປ່ຽນຖ່າຍ ແລະ ອາຍຸການຂອງວັດຖຸ, ສິນຄ້າສະສົມແຫ່ງລັດ;
3. ກະຊວງທີ່ຄຸ້ມຄອງວັດຖຸ, ສິນຄ້າສະສົມແຫ່ງລັດຕົກລົງຮັບ, ເບີກຈ່າຍວັດຖຸ, ສິນຄ້າສະສົມແຫ່ງລັດ ຕາມແຜນການປ່ຽນຖ່າຍ ແລະ ອາຍຸການຂອງວັດຖຸ, ສິນຄ້າສະສົມແຫ່ງລັດ ບົນພື້ນຖານການເຫັນດີ ຂອງກະຊວງການເງິນ.

**ມາດຕາ 27 ການເຄື່ອນຍ້າຍວັດຖຸ, ສິນຄ້າສະສົມແຫ່ງລັດ**

ລັດຖະມົນຕີວ່າການກະຊວງທີ່ຄຸ້ມຄອງວັດຖຸ, ສິນຄ້າສະສົມແຫ່ງລັດ ມີສິດຕົກລົງເຄື່ອນຍ້າຍວັດຖຸ, ສິນຄ້າສະສົມແຫ່ງລັດ ໃນກໍລະນີ ດັ່ງນີ້:

1. ເຄື່ອນຍ້າຍ ຕາມການກໍານົດ ແລະ ແຜນການເພື່ອຮັບປະກັນໃຫ້ວັດຖຸ, ສິນຄ້າສະສົມແຫ່ງລັດ ມີຄວາມປອດໄພ, ເໝາະສົມກັບເງື່ອນໄຂທາງດ້ານສາງເກັບມ້ຽນ ແລະ ການປົກປັກຮັກສາ;
2. ເຄື່ອນຍ້າຍອອກຈາກເຂດທີ່ມີຄວາມສ່ຽງ ຫຼື ຖືກໄພພິບັດ;
3. ເຄື່ອນຍ້າຍໄປຫາຈຸດທີ່ຈໍາເປັນ ເພື່ອຮັບມືຕໍ່ສະຖານະການ ທີ່ເກີດຂຶ້ນ;
4. ເຄື່ອນຍ້າຍຍ້ອນຄວາມຈໍາເປັນ ໃນການກວດນັບ, ມອບ-ຮັບ, ກວດກາ ແລະ ສືບສວນ.

ລັດຖະມົນຕີວ່າການກະຊວງທີ່ຄຸ້ມຄອງວັດຖຸ, ສິນຄ້າສະສົມແຫ່ງລັດ ຕ້ອງແຈ້ງໃຫ້ກະຊວງການເງິນ ຊາບກ່ຽວກັບການເຄື່ອນຍ້າຍວັດຖຸ, ສິນຄ້າສະສົມແຫ່ງລັດ ພາຍໃນກໍານົດເວລາ ສາມວັນລັດຖະການ ນັບແຕ່ວັນທີ່ມີການເຄື່ອນຍ້າຍເປັນຕົ້ນໄປ.

## ພາກທີ IV
## ຂໍ້ຫ້າມ

**ມາດຕາ 28 ຂໍ້ຫ້າມສໍາລັບພະນັກງານ**

ຫ້າມພະນັກງານມີພຶດຕິກໍາ ດັ່ງນີ້:

1. ສວຍໃຊ້ໜ້າທີ່ຕໍາແໜ່ງ, ໃຊ້ຄວາມຮຸນແຮງ, ບັງຄັບນາບຂູ່, ຂັດຂວາງເພື່ອຫາຜົນປະໂຫຍດສ່ວນຕົວ;
2. ເປີດເຜີຍຄວາມລັບທາງລັດຖະການ ແລະ ຂໍ້ມູນດ້ານວິຊາສະເພາະ;
3. ຮັບສິນບົນ, ສົມຮູ້ຮ່ວມຄິດເອົາເງິນ, ວັດຖຸ ຫຼື ສິນຄ້າຂອງຄັງສະສົມແຫ່ງລັດ;
4. ມີພຶດຕິກໍາອື່ນທີ່ມີການລະເມີດລະບຽບກົດໝາຍ.

**ມາດຕາ 29 ຂໍ້ຫ້າມສໍາລັບບຸກຄົນ, ນິຕິບຸກຄົນ ແລະການຈັດຕັ້ງອື່ນ**

ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງອື່ນ ມີພຶດຕິກໍາດັ່ງນີ້:

1. ແຊກແຊງ ຫຼືຂັດຂວາງການປະຕິບັດໜ້າທີ່ວຽກງານຂອງພະນັກງານ, ອົງການຄຸ້ມຄອງວຽກງານຄັງສະສົມແຫ່ງລັດ;

2. ປອມແປງເອກະສານ;
3. ປິດບັງ, ເຊື່ອງອຳຂໍ້ມູນຂ່າວສານ;
4. ໃຫ້ສິນບົນ ຫຼື ຄ່າຈ້າງແກ່ພະນັກງານ ຫຼື ສົມຮູ້ຮ່ວມຄິດເອົາເງິນ, ວັດຖຸ, ສິນຄ້າຂອງຄັງສະສົມແຫ່ງລັດ;
5. ມີພຶດຕິກຳອື່ນທີ່ມີການລະເມີດລະບຽບກົດໝາຍ.

## ພາກທີ V
## ການຄຸ້ມຄອງ ແລະ ກວດກາ
### ໝວດທີ 1
### ອົງການຄຸ້ມຄອງວຽກງານຄັງສະສົມແຫ່ງລັດ

**ມາດຕາ 30 ອົງການຄຸ້ມຄອງວຽກງານຄັງສະສົມແຫ່ງລັດ**

ລັດຖະບານ ເປັນຜູ້ຄຸ້ມຄອງວຽກງານຄັງສະສົມແຫ່ງລັດ ຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງການເງິນ, ບັນດາກະຊວງເປັນເຈົ້າການໃນການຈັດຕັ້ງປະຕິບັດ.

ອົງການຄຸ້ມຄອງວຽກງານຄັງສະສົມແຫ່ງລັດ ປະກອບມີ :

1. ກະຊວງການເງິນ ໂດຍມີ ກົມສະສົມແຫ່ງລັດ ແລະ ຫ້ອງການສະສົມແຫ່ງລັດ ປະຈຳພາກ ເປັນເສນາທິການ. ສຳລັບທີ່ຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່ຂອງກົມສະສົມແຫ່ງລັດ ແລະ ຫ້ອງການສະສົມປະຈຳພາກ ໄດ້ກຳນົດໄວ້ໃນລະບຽບການສະເພາະ;
2. ກະຊວງແຜນການ ແລະ ການລົງທຶນ;
3. ກະຊວງ ທີ່ຄຸ້ມຄອງວັດຖຸ, ສິນຄ້າສະສົມແຫ່ງລັດ.

**ມາດຕາ 31 ສິດ ແລະໜ້າທີ່ ຂອງກະຊວງການເງິນ**

ໃນການຄຸ້ມຄອງຄັງສະສົມແຫ່ງລັດກະຊວງການເງິນມີສິດ ແລະ ໜ້າທີ່ດັ່ງນີ້:

1. ກະຊວງການເງິນ ຈັດຕັ້ງຄຸ້ມຄອງ, ປົກປັກຮັກສາໂດຍກົງປະເພດວັດຖຸ, ສິນຄ້າສະສົມແຫ່ງລັດ ທີ່ຕອບສະໜອງຄວາມຮຽກຮ້ອງຕ້ອງການທາງດ້ານເສດຖະກິດ ແລະ ຊີວິດການເປັນຢູ່ເພື່ອປ້ອງກັນ, ແກ້ໄຂຜົນກະທົບຈາກໄພພິບັດ ແລະ ເຫດການສຸກເສີນ ເປັນຕົ້ນແມ່ນ: ເຂົ້າ ນ້ຳມັນເຊື້ອໄຟ, ອຸປະກອນກູ້ໄພ ແລະ ເຄື່ອງຊ່ວຍເຫຼືອຜູ້ປະສົບໄພ;
2. ຄົ້ນຄວ້າ, ສ້າງແຜນຍຸດທະສາດ, ແຜນນະໂຍບາຍ ແລະ ລະບຽບກົດໝາຍກ່ຽວກັບວຽກງານຄັງສະສົມແຫ່ງລັດສະເໜີລັດຖະບານພິຈາລະນາ;
3. ອອກລະບຽບການ, ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບວຽກງານຄັງສະສົມແຫ່ງລັດ;

4. ໂຄສະນາ, ເຜີຍແຜ່ແນວທາງນະໂຍບາຍ, ກົດໝາຍ ແລະນິຕິກຳກ່ຽວກັບວຽກງານຄັງສະສົມແຫ່ງລັດ;
5. ຄົ້ນຄວ້າ ແລະ ພິຈາລະນາຮັບຮອງມາດຕະຖານວັດຖຸ, ສິນຄ້າສະສົມແຫ່ງລັດ, ລະບົບສາງ, ລາຄາຊື້ - ຂາຍ ແລະ ການສະສາງວັດຖຸ, ສິນຄ້າສະສົມແຫ່ງລັດ;
6. ສ້າງແຜນການ, ແຜນງົບປະມານຄັງສະສົມແຫ່ງລັດສະເໜີ ລັດຖະບານພິຈາລະນາ;
7. ຈັດສັນ ແລະ ແບ່ງປັນງົບປະມານທີ່ໄດ້ຮັບຮອງໃຫ້ແກ່ກະຊວງທີ່ຄຸ້ມຄອງວັດຖຸ, ສິນຄ້າສະສົມແຫ່ງລັດ;
8. ຄຸ້ມຄອງລວມສູນກ່ຽວກັບບັນຊີວັດຖຸ, ສິນຄ້າສະສົມແຫ່ງລັດ, ລາຍຮັບ ແລະ ລາຍຈ່າຍກ່ຽວກັບວຽກງານຄັງສະສົມແຫ່ງລັດ;
9. ຮັບຮອງແຜນງົບປະມານ ການເຄື່ອນໄຫວວຽກງານຄັງສະສົມແຫ່ງລັດ ແຕ່ລະປີ ທີ່ໄດ້ລະບຸໄວ້ໃນ ມາດຕາ 9 ຂອງດຳລັດສະບັບນີ້;
10. ກໍ່ສ້າງພື້ນຖານໂຄງລ່າງ, ບຳລຸງ, ຝຶກອົບຮົມພະນັກງານວຽກງານຄັງສະສົມແຫ່ງລັດ;
11. ຕິດຕາມ, ກວດກາການຈັດຕັ້ງປະຕິບັດວຽກງານຄັງສະສົມແຫ່ງລັດ ແລະ ແກ້ໄຂການຮ້ອງທຸກ ທີ່ກ່ຽວຂ້ອງກັບວຽກງານຄັງສະສົມແຫ່ງລັດ ຕາມຂອບເຂດສິດອຳນາດຂອງຕົນ;
12. ຄຸ້ມຄອງໂດຍກົງ ຄັງສະສົມເປັນເງິນຕາມອັດຕາສ່ວນ ທີ່ລັດຖະບານກຳນົດ;
13. ຕາງໜ້າລັດຖະບານຖືຮຸ້ນ ກັບບັນດາບໍລິສັດ ທີ່ພົວພັນເຖິງວຽກງານຄັງສະສົມແຫ່ງລັດ;
14. ປະສານສົມທົບ ກັບບັນດາກະຊວງ, ອົງການທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງໃນການເຄື່ອນໄຫວວຽກງານຄັງສະສົມແຫ່ງລັດ;
15. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ, ອົງການຈັດຕັ້ງສາກົນກ່ຽວກັບວຽກງານຄັງສະສົມແຫ່ງລັດ;
16. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານຄັງສະສົມແຫ່ງລັດໃຫ້ແກ່ ລັດຖະບານຢ່າງເປັນປົກກະຕິ;
17. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມການມອບໝາຍ.

**ມາດຕາ 32 ສິດ ແລະ ໜ້າທີ່ ຂອງກະຊວງແຜນການ ແລະ ການລົງທຶນ**

ໃນການຄຸ້ມຄອງວຽກງານຄັງສະສົມແຫ່ງລັດ ກະຊວງແຜນການ ແລະ ການລົງທຶນ ມີສິດ ແລະ ໜ້າທີ່ດັ່ງນີ້:

1. ຄົ້ນຄວ້າ ແລະ ສັງລວມແຜນງົບປະມານການລົງທຶນກໍ່ສ້າງພື້ນຖານກ່ຽວກັບວຽກງານຄັງສະສົມແຫ່ງລັດເພື່ອນຳສະເໜີລັດຖະບານພິຈາລະນາ;
2. ຄົ້ນຄວ້າ ແລະ ປະກອບຄຳເຫັນຕໍ່ແຜນຍຸດທະສາດ, ແຜນນະໂຍບາຍ ແລະ ລະບຽບກົດໝາຍກ່ຽວກັບວຽກງານຄັງສະສົມແຫ່ງລັດ;
3. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມລະບຽບກົດໝາຍ.

**ມາດຕາ 33 ສິດ ແລະ ໜ້າທີ່ຂອງກະຊວງທີ່ຄຸ້ມຄອງວັດຖຸ, ສິນຄ້າສະສົມແຫ່ງລັດ**

ໃນການຄຸ້ມຄອງວຽກງານຄັງສະສົມແຫ່ງລັດ ກະຊວງທີ່ຄຸ້ມຄອງວັດຖຸ, ສິນຄ້າສະສົມແຫ່ງລັດ ປະກອບມີ ບັນດາກະຊວງ ດັ່ງນີ້:

1. ກະຊວງປ້ອງກັນປະເທດ ຈັດຕັ້ງຄຸ້ມຄອງ ແລະປົກປັກຮັກສາໂດຍກົງປະເພດວັດຖຸ, ສິນຄ້າສະສົມແຫ່ງລັດທີ່ຕອບສະໜອງຄວາມຮຽກຮ້ອງຕ້ອງການກ່ຽວກັບວຽກງານປ້ອງກັນປະເທດ;
2. ກະຊວງປ້ອງກັນຄວາມສະຫງົບ ຈັດຕັ້ງຄຸ້ມຄອງ ແລະ ປົກປັກຮັກສາໂດຍກົງປະເພດວັດຖຸ, ສິນຄ້າສະສົມແຫ່ງລັດທີ່ຕອບສະໜອງຄວາມຮຽກຮ້ອງຕ້ອງການກ່ຽວກັບວຽກງານປ້ອງກັນຄວາມສະຫງົບ;
3. ກະຊວງສາທາລະນະສຸກ ຈັດຕັ້ງຄຸ້ມຄອງ ແລະ ປົກປັກຮັກສາໂດຍກົງໝວດວັດຖຸ, ສິນຄ້າຮັບໃຊ້ໃຫ້ແກ່ການປ້ອງກັນ, ຕ້ານ, ສະກັດກັ້ນພະຍາດລະບາດ ແລະ ຊ່ວຍເຫຼືອໃນເວລາສຸກເສີນໃຫ້ແກ່ຄົນ;
4. ກະຊວງກະສິກຳ ແລະ ປ່າໄມ້ ຈັດຕັ້ງຄຸ້ມຄອງ ແລະ ປົກປັກຮັກສາໂດຍກົງໝວດວັດຖຸ, ສິນຄ້າຮັບໃຊ້ໃຫ້ແກ່ການປ້ອງກັນ, ຕ້ານ, ສະກັດກັ້ນພະຍາດລະບາດ ແລະ ຊ່ວຍເຫຼືອໃນເວລາສຸກເສີນໃຫ້ແກ່ພືດ, ສັດ ແລະ ສະສົມແນວພັນພືດ.

ບັນດາກະຊວງອື່ນຄຸ້ມຄອງໂດຍກົງບາງໝວດວັດຖຸ, ສິນຄ້າສະສົມແຫ່ງລັດ ຕາມການມອບໝາຍຂອງລັດຖະບານ.

ບັນດາກະຊວງທີ່ຄຸ້ມຄອງວັດຖຸ, ສິນຄ້າສະສົມແຫ່ງລັດມີສິດ ແລະ ໜ້າທີ່ດັ່ງນີ້:

- ເຂົ້າຮ່ວມຄົ້ນຄວ້າສ້າງແຜນຍຸດທະສາດ, ແຜນນະໂຍບາຍ, ລະບຽບກົດໝາຍກ່ຽວກັບວຽກງານຄັງສະສົມແຫ່ງລັດ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
- ໂຄສະນາ, ເຜີຍແຜ່ນະໂຍບາຍ ແລະ ລະບຽບກົດໝາຍກ່ຽວກັບຄັງສະສົມແຫ່ງລັດ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;
- ສ້າງແຜນການສະສົມໝວດວັດຖຸ, ສິນຄ້າສະສົມແຫ່ງລັດ ທີ່ຢູ່ໃນຄວາມຮັບຜິດຊອບ ຂອງຕົນລວມທັງ ກຳນົດລະດັບຄັງສະສົມ, ມາດຕະຖານເຕັກນິກ ແລະ ກຳນົດໝາຍຂອງໝວດວັດຖຸ, ສິນຄ້າສະສົມ ແຫ່ງລັດ ດັ່ງກ່າວ;
- ຂຶ້ນແຜນງົບປະມານການເຄື່ອນໄຫວວຽກງານຄັງສະສົມແຫ່ງລັດ ສົ່ງໃຫ້ກະຊວງການເງິນເພື່ອສັງລວມສະເໜີຕໍ່ລັດຖະບານ ພິຈາລະນາ;
- ປະສານສົມທົບກັບພາກສ່ວນກ່ຽວຂ້ອງໃນການ ຊື້-ຂາຍ, ຮັບ, ເບີກຈ່າຍ ແລະ ສະສາງໝວດວັດຖຸ, ສິນຄ້າສະສົມແຫ່ງລັດ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;
- ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານຄັງສະສົມແຫ່ງລັດທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນຕໍ່ກະຊວງການເງິນ ແລະ ລັດຖະບານ ຢ່າງເປັນປົກກະຕິ;
- ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມການມອບໝາຍ.

**ມາດຕາ 34 ຄວາມຮັບຜິດຊອບ ຂອງອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ**

ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນມີຄວາມຮັບຜິດຊອບໃນການໃຫ້ການຮ່ວມມື, ສະໜອງຂໍ້ມູນ ແລະ ອໍານວຍຄວາມສະດວກໃນການເຄື່ອນໄຫວວຽກງານຄັງສະສົມແຫ່ງລັດ ດັ່ງນີ້:

1. ຊີ້ນໍາບັນດາພະແນກການ, ຫ້ອງການ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃຫ້ອໍານວຍຄວາມສະດວກ ແລະ ເຂົ້າຮ່ວມການເຄື່ອນໄຫວວຽກງານຄັງສະສົມແຫ່ງລັດ ຢູ່ທ້ອງຖິ່ນຕົນ ພ້ອມທັງຮັບປະກັນຄວາມປອດໄພ ແລະ ຮັກສາຄວາມລັບ;
2. ຈັດສັນທີ່ດິນກໍ່ສ້າງສາງວັດຖຸ, ສິນຄ້າສະສົມແຫ່ງລັດ ຕາມແຜນຜັງລວມ ທີ່ໄດ້ຮັບຮອງ;
3. ປະຕິບັດພາລະບົດບາດຂອງຕົນຕາມລະບຽບກົດໝາຍ.

## ໝວດທີ 2
## ອົງການກວດກາວຽກງານຄັງສະສົມແຫ່ງລັດ

**ມາດຕາ 35 ອົງການກວດກາ**

ອົງການກວດກາວຽກງານຄັງສະສົມແຫ່ງລັດປະກອບມີ:

1. ອົງການກວດກາພາຍໃນ ແມ່ນອົງການດຽວກັບອົງການຄຸ້ມຄອງຄັງສະສົມແຫ່ງລັດທີ່ໄດ້ກໍານົດໄວ້ໃນ ມາດຕາ 30 ຂອງດໍາລັດສະບັບນີ້;
2. ອົງການກວດກາພາຍນອກແມ່ນ ອົງການກວດກາລັດຖະບານ.

**ມາດຕາ 36 ເນື້ອໃນກວດກາ**

ການກວດກາວຽກງານຄັງສະສົມແຫ່ງລັດ ມີເນື້ອໃນ ດັ່ງນີ້:

1. ການຈັດຕັ້ງປະຕິບັດລະບຽບກົດໝາຍກ່ຽວກັບວຽກງານຄັງສະສົມແຫ່ງລັດ;
2. ການຈັດຕັ້ງປະຕິບັດແຜນການກ່ຽວກັບການຄຸ້ມຄອງ, ການນໍາໃຊ້, ການຮັບ, ເບີກຈ່າຍ, ຊື້ຂາຍວັດຖຸ, ສິນຄ້າ ແລະ ເງິນ ຂອງຄັງສະສົມແຫ່ງລັດ.

**ມາດຕາ 37 ຮູບການກວດກາ**

ການກວດກາວຽກງານຄັງສະສົມແຫ່ງລັດປະກອບມີ ສາມ ຮູບການ ດັ່ງນີ້:

1. ການກວດກາຕາມລະບົບປົກກະຕິ;
2. ການກວດກາໂດຍແຈ້ງໃຫ້ຮູ້ລ່ວງໜ້າ;
3. ການກວດກາແບບກະທັນຫັນ.

ການກວດກາຕາມລະບົບປົກກະຕິ ແມ່ນການກວດກາທີ່ດໍາເນີນໄປຕາມແຜນການຢ່າງເປັນປະຈໍາ ແລະ ມີກໍານົດເວລາແນ່ນອນ.

ການກວດກາໂດຍແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນການກວດການອກແຜນການເມື່ອເຫັນວ່າມີຄວາມຈໍາເປັນ ຊຶ່ງແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ.

ການກວດກາແບບກະທັນຫັນ ແມ່ນການກວດກາໂດຍຮີບດ່ວນຊຶ່ງບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ.

## ພາກທີ VI
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 38 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼືການຈັດຕັ້ງທີ່ມີຜົນງານອັນດີເດັ່ນໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ ຈະໄດ້ຮັບ ການຍ້ອງຍໍ ແລະນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 39 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼືການຈັດຕັ້ງໃດຫາກໄດ້ລະເມີດດຳລັດສະບັບນີ້ ຊຶ່ງກໍ່ຄວາມເສຍຫາຍໃຫ້ແກ່ຜົນປະ ໂຫຍດຂອງລັດ, ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ ຈະຖືກປະຕິບັດມາດຕະການສຶກສາອົບຮົມ, ປະຕິບັດວິໄນ, ປັບໃໝ ຫຼື ລົງໂທດທາງອາຍາ ຕາມແຕ່ລະກໍລະນີໜັກ ຫຼື ເບົາລວມທັງການໃຊ້ແທນຄ່າເສຍຫາຍທາງແພ່ງ.

## ພາກທີ VII
## ບົດບັນຍັດສຸດທ້າຍ

**ມາດຕາ 40 ການຈັດຕັ້ງປະຕິບັດ**

ກະຊວງການເງິນ ເປັນເຈົ້າການປະສານສົມທົບກັບບັນດາກະຊວງ, ອົງການທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງຈັດຕັ້ງປະຕິບັດດຳລັດສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 41 ຜົນສັກສິດ**

ດຳລັດສະບັບນີ້ມີຜົນສັກສິດ ນັບແຕ່ວັນທີ່ ນາຍົກລັດຖະມົນຕີ ລົງລາຍເຊັນເປັນຕົ້ນໄປ. ຂໍ້ກຳນົດບົດບັນຍັດໃດທີ່ຂັດກັບດຳລັດສະບັບນີ້ລ້ວນແຕ່ຖືກຍົກເລີກ.

**ນາຍົກລັດຖະມົນຕີ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ນາຍົກລັດຖະມົນຕີ

ທອງສິງ ທຳມະວົງ